ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 231 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍ**

**ກ່ຽວກັບສ່ວຍສາອາກອນ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍກ່ຽວກັບສ່ວຍສາອາກອນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 07/ຄປຈ, ລົງວັນທີ 02 ກັນຍາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 08 / 21

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາ
## ຂອງກົດໝາຍກ່ຽວກັບສ່ວຍສາອາກອນ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໃນວາລະກອງປະຊຸມ ຄັ້ງວັນທີ 7 ສິງຫາ 2021.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                  ເລກທີ 01 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 7 ສິງຫາ 2021

# ກົດໝາຍວ່າດ້ວຍ
# ການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນຊົມໃຊ້ ເພື່ອໃຫ້ມີຄວາມເປັນເອກະພາບ, ລວມສູນ, ມີປະສິດທິພາບ ແລະ ປະສິດທິຜົນ, ຊຸກຍູ້ ສົ່ງເສີມ ໃຫ້ນິຕິບຸກຄົນ ແລະ ການຈັດຕັ້ງ ປະຕິບັດພັນທະອາກອນຕ່າງໆເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ, ໂປ່ງໃສ ແລະ ຍຸຕິທຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການປັບປຸງເນື້ອໃນຂອງກົດໝາຍ

ເນື້ອໃນຂອງແຕ່ລະກົດໝາຍທີ່ປັບປຸງ ມີ ດັ່ງນີ້:

I. ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ

ມາດຕາ 32 ກຳນົດເວລາການມອບອາກອນ

ກຳນົດເວລາການມອບອາກອນ ໃຫ້ປະຕິບັດ ດັ່ງນີ້:

1. ການນຳເຂົ້າສິນຄ້າ ໃຫ້ມອບອາກອນ ໃນເວລາແຈ້ງເສຍພາສີຂາເຂົ້າຢູ່ດ່ານບ່ອນນຳເຂົ້າສິນຄ້າ, ຢູ່ທະນາຄານທີ່ມີບັນຊີຂອງຄັງເງິນແຫ່ງຊາດ ຫຼື ຢູ່ຄັງເງິນແຫ່ງຊາດ ຕາມການຄິດໄລ່ຂອງເຈົ້າໜ້າທີ່ພາສີ ຫຼື ໃຫ້ມອບອາກອນໃນເວລາມີການສະໜອງສິນຄ້າຢູ່ພາຍໃນປະເທດ ຕາມລະບຽບການທີ່ລັດຖະບານກຳນົດ;

2. ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ສຳລັບການຜະລິດ, ການສະໜອງສິນຄ້າ ແລະ ບໍລິການ ຢູ່ພາຍໃນປະເທດ, ອາກອນລາຍໄດ້ຈາກເງິນເດືອນ ຫຼື ຄ່າແຮງງານ ໃຫ້ມອບເປັນເດືອນ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ;

3. ອາກອນລາຍໄດ້ຈາກເງິນປັນຜົນກຳໄລ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

- ກໍລະນີ ມີການຕົກລົງແບ່ງປັນຜົນກຳໄລ ໃຫ້ມອບພາຍຫຼັງມີບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ພາຍໃນເວລາ ສິບຫ້າວັນ ລັດຖະການ;
- ກໍລະນີ ມີການຕົກລົງບໍ່ແບ່ງປັນຜົນກຳໄລ ຕ້ອງໄດ້ແຈ້ງຕໍ່ເຈົ້າໜ້າທີ່ສ່ວຍສາອາກອນ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນມີບົດບັນທຶກກອງປະຊຸມ;
- ກໍລະນີ ບໍ່ໄດ້ແຈ້ງຕໍ່ເຈົ້າໜ້າທີ່ສ່ວຍສາອາກອນ ກ່ຽວກັບການບໍ່ເປີດກອງປະຊຸມຜູ້ຖືຮຸ້ນ ຫຼື ຂາຮຸ້ນ ຫຼື ບໍ່ແຈ້ງການແບ່ງປັນຜົນກຳໄລ ກ່ອນວັນທີ 30 ມິຖຸນາ ຂອງປີ

ຖັດໄປ ເຈົ້າໜ້າທີ່ສ່ວຍສາອາກອນ ສາມາດຄິດໄລ່ໃຫ້ເສຍອາກອນລາຍໄດ້ຈາກເງິນປັນຜົນກຳໄລ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້.

4. ອາກອນກຳໄລ ໃຫ້ມອບເປັນ ສອງຄັ້ງຕໍ່ປີ ຊຶ່ງການມອບອາກອນກຳໄລ ຄັ້ງທີ 1 ແມ່ນບໍ່ໃຫ້ກາຍ ວັນທີ 20 ກໍລະກົດ ຂອງປີ ແລະ ຄັ້ງທີ 2 ບໍ່ໃຫ້ກາຍວັນທີ 20 ມັງກອນ ຂອງປີຖັດໄປ.

ອາກອນກຳໄລທີ່ຕ້ອງມອບໃນແຕ່ລະຄັ້ງນັ້ນ ໃຫ້ມອບບົນພື້ນຖານກຳໄລຕົວຈິງຕາມການສະຫຼຸບບັນຊີຂອງແຕ່ລະ ຫົກເດືອນ ຫຼື ການຄາດຄະເນໄວ້ໃນແຜນການມອບຂອງປີການບັນຊີ ຫຼື ອາກອນກຳໄລທີ່ມອບຕົວຈິງຂອງປີຜ່ານມາ. ພາຍຫຼັງສະຫຼຸບບັນຊີປະຈຳປີແລ້ວ ຕ້ອງໄດ້ເສຍອາກອນກຳໄລປະຈຳປີ ຕາມເອກະສານລາຍງານການເງິນ ເພື່ອໄລ່ລຽງເງິນອາກອນກຳໄລຕົວຈິງທີ່ຕ້ອງມອບ; ຖ້າເຫັນວ່າອາກອນກຳໄລຕົວຈິງ ຫາກຫຼາຍກວ່າອາກອນກຳໄລທີ່ມອບແລ້ວ ກໍຕ້ອງໄດ້ມອບຕື່ມ ຫຼື ຫາກໜ້ອຍກວ່າ ກໍຕ້ອງໄດ້ສົ່ງຄືນ ຫຼື ຍົກໄປຫັກຕໍ່ໃນຄັ້ງຖັດໄປ ຕາມການເຫັນດີຂອງຜູ້ມອບອາກອນ;

5. ອາກອນລາຍໄດ້ຂອງຈຸນລະວິສາຫະກິດ ໃຫ້ມອບຕາມທີ່ໄດ້ກຳນົດໄວ້ໃນສັນຍາ ລະຫວ່າງ ຈຸນລະວິສາຫະກິດ ແລະ ຂະແໜງສ່ວຍສາອາກອນ ເປັນເດືອນ, ເປັນງວດ ຫຼື ເປັນປີ;

6. ການມອບອາກອນມູນຄ່າເພີ່ມຂອງບຸກຄົນ ທີ່ໄດ້ຮັບການສະໜອງຈາກຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ແລະ ອາກອນລາຍໄດ້ປະເພດອື່ນ ໃຫ້ມອບພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຈ່າຍລາຍໄດ້ດັ່ງກ່າວເປັນຕົ້ນໄປ.

ສຳລັບກຳນົດເວລາການມອບ ອາກອນ ທີ່ດິນ ແລະ ຊັບສິນ, ອາກອນສິ່ງແວດລ້ອມ, ຄ່າທຳນຽມ ແລະ ຄ່າບໍລິການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## II. ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ

### ມາດຕາ 11 ກິດຈະກຳທີ່ຖືກເກັບອາກອນມູນຄ່າເພີ່ມ

ກິດຈະກຳທີ່ຖືກເກັບອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ການນຳເຂົ້າສິນຄ້າ;

2. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ;

3. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ໂດຍຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ;

4. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ນອກເຂດເສດຖະກິດພິເສດໃນ ສປປ ລາວ ຂອງວິສາຫະກິດທີ່ຈົດທະບຽນສ້າງຕັ້ງຢູ່ໃນເຂດເສດຖະກິດພິເສດ;

5. ການສະໜອງ ສິນຄ້າ ແລະ ການບໍລິການ ຜ່ານລະບົບເອເລັກໂຕຣນິກ.

ມາດຕາ 12 ກິດຈະກຳທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ

ກິດຈະກຳທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ມີ ດັ່ງນີ້:

**1. ສຳລັບສິນຄ້າທີ່ນຳເຂົ້າ:**

1.1. ແນວພັນພືດທຸກປະເພດ, ແນວພັນສັດ, ນໍ້າເຊື້ອສັດ, ວັກຊີນກັນພະຍາດ, ອຸປະກອນ ແລະ ນໍ້າຢາ (ໄນໂຕຣເຈນແຫຼວ) ເພື່ອເກັບຮັກສາ ວັກຊີນກັນພະຍາດ ແລະ ນໍ້າເຊື້ອສັດ, ທີ່ອາຫານສັດ, ວັດຖຸດິບຮັບໃຊ້ການຜະລິດທີ່ອາຫານສັດ ແລະ ການຜະລິດວັກຊີນ;

1.2. ວັດຖຸດິບທີ່ນຳໃຊ້ເຂົ້າໃນການຜະລິດຝຸ່ນ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ, ຝຸ່ນຊີວະພາບ, ຝຸ່ນວິທະຍາສາດ, ຢາປາບສັດຕູພືດ ທີ່ເປັນອັນຕະລາຍໜ້ອຍ ແລະ ບໍ່ມີພິດກະທົບທັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

1.3. ວັດຖຸປະກອນ ແລະ ເຄື່ອງກົນຈັກ ຮັບໃຊ້ວຽກງານກະສິກຳ;

1.4. ວັດຖຸດິບ, ແຮ່ທາດ, ວັດຖຸປະກອນ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດ ເພື່ອສົ່ງອອກ;

1.5. ວັດຖຸປະກອນ ທີ່ບໍ່ສາມາດ ສະໜອງ ຫຼື ຜະລິດໄດ້ ໃນ ສປປ ລາວ ແລະ ພາຫະນະກົນຈັກ ເພື່ອເປັນຊັບສິນບັດຄົງທີ່ ແລະ ຮັບໃຊ້ການຜະລິດໂດຍກົງ;

1.6. ເຄມີ ເພື່ອການຄົ້ນຄວ້າ, ທົດລອງ, ການວິໄຈວິທະຍາສາດ ຂອງອົງການຈັດຕັ້ງລັດ;

1.7. ສະແຕັມອາກອນ ຫຼື ສະແຕັມໄປສະນີ;

1.8. ເຮືອບິນ ແລະ ວັດຖຸປະກອນຮັບໃຊ້ການຂົນສົ່ງທາງອາກາດ ທັງພາຍໃນ ແລະ ຕ່າງປະເທດ;

1.9. ນໍ້າມັນເຊື້ອໄຟ ແລະ ນໍ້າມັນອື່ນ ເພື່ອຮັບໃຊ້ການບໍລິການຂົນສົ່ງສາກົນທາງອາກາດ;

1.10. ສິນຄ້າ ເພື່ອນຳໃຊ້ໃນວຽກງານທາງລັດຖະການຂອງສະຖານເອກອັກຄະລັດຖະທູດ, ອົງການຈັດຕັ້ງສາກົນ ທີ່ປະຈຳຢູ່ ສປປ ລາວ ຕາມຂໍ້ຕົກລົງ, ສັນຍາສາກົນ ແລະ ຕາມການອະນຸຍາດຂອງກະຊວງທີ່ກ່ຽວຂ້ອງ;

1.11. ປຶ້ມ ແບບຮຽນ, ແບບສອນ, ອຸປະກອນທີ່ທັນສະໄໝ ເພື່ອຮັບໃຊ້ການຮຽນ ການສອນ, ຮັບໃຊ້ໃນຫ້ອງຄົ້ນຄວ້າ ແລະ ທົດລອງ ທີ່ໄດ້ຮັບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ;

1.12. ຄຳແທ່ງ ເພື່ອຄໍ້າປະກັນການພິມທະນະບັດ, ການນຳເຂົ້າທະນະບັດ ແລະ ການນຳເຂົ້າເຈ້ຍ ຫຼື ໂລຫະ ເພື່ອພິມທະນະບັດ ໂດຍທະນາຄານແຫ່ງ ສປປ ລາວ ຫຼື ຜູ້ໄດ້ຮັບມອບສິດຈາກທະນາຄານແຫ່ງ ສປປ ລາວ;

1.13. ຢາປິ່ນປົວສັດ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງສັດ;

1.14. ຢາພື້ນເມືອງ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງຄົນ, ເລືອດຄົນ, ເຄື່ອງຄໍ້າຊູ, ລໍ້ຮັບໃຊ້ ຄົນເຈັບ, ຄົນພິການ ແລະ ຜູ້ສູງອາຍຸ;

1.15. ເຄື່ອງມື, ອຸປະກອນການແພດ, ເຄື່ອງວິເຄາະຕ່າງໆ ເພື່ອຮັບໃຊ້ບໍລິການສັງຄົມ ຂອງບັນດາໂຮງໝໍ, ສຸກສາລາ;

1.16. ຍານພາຫະນະຮັບໃຊ້ວຽກງານວິຊາສະເພາະ, ເຄື່ອນໄຫວຮັບໃຊ້ສາທາລະນະປະໂຫຍດ ເປັນຕົ້ນ ລົດດັບເພີງ, ລົດຮັບສົ່ງຄົນເຈັບ, ລົດສ້ອມແປງ, ລົດຖ່າຍ

ທອດໂທລະພາບ, ວິທະຍຸ ແລະ ລົດວິຊາສະເພາະອື່ນ ຂອງຂະແໜງການລັດ ແລະ ອົງການຈັດຕັ້ງສັງຄົມ;

1.17. ລົດຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຍົກເວັ້ນລົດຮັບໃຊ້ວຽກງານບໍລິຫານ;

1.18. ເຄື່ອງຮັບໃຊ້ບາງປະເພດ ແລະ ຂອງຂວັນ ຂອງນັກສຶກສາ, ພະນັກງານ-ລັດຖະກອນ, ນັກການທູດ ທີ່ສຳເລັດວຽກງານຢູ່ຕ່າງປະເທດ ແລະ ຄົນຕ່າງປະເທດທີ່ມີຈຸດປະສົງຍົກຍ້າຍມາ ຢູ່ ສປປ ລາວ ແບບຖາວອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ, ຍົກເວັ້ນວັດຖຸສິ່ງຂອງທີ່ໄດ້ຈາກການສືບທອດມູນມໍຣະດົກ;

1.19. ສິນຄ້າ ເພື່ອສະໜອງໃຫ້ແກ່ໂຄງການຊ່ວຍເຫຼືອລ້າ ຊຶ່ງໄດ້ກຳນົດໄວ້ໃນສັນຍາ, ຂໍ້ຜູກພັນ ທີ່ລັດຖະບານເຊັນກັບຕ່າງປະເທດ;

1.20. ການນຳເຂົ້າພະລັງງານໄຟຟ້າຈາກຕ່າງປະເທດ ເພື່ອມາສະໜອງຢູ່ ສປປ ລາວ.

**2. ສຳລັບການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ:**

2.1. ຜົດກະສິກຳທີ່ຍັງບໍ່ທັນໄດ້ຮັບການປຸງແຕ່ງ ຫຼື ຜ່ານການປຸງແຕ່ງຂັ້ນຕົ້ນ ເປັນຕົ້ນ ການຝານ, ການບົດ, ການສີເອົາເປືອກອອກ, ການເອົາເມັດອອກ;

2.2. ສັດທຸກປະເພດທີ່ມີຊີວິດ ຫຼື ບໍ່ມີຊີວິດ ທັງເປັນໂຕ ຫຼື ເປັນຊິ້ນສ່ວນ ທີ່ຍັງບໍ່ທັນໄດ້ປຸງແຕ່ງ ຫຼື ໄດ້ປຸງແຕ່ງຂັ້ນຕົ້ນ ເພື່ອເຮັດໃຫ້ຢູ່ໃນສະພາບສົດ ຫຼື ບໍ່ໃຫ້ເນົ່າເປື່ອຍ;

2.3. ການບໍລິການ ປູກຕົ້ນໄມ້ໃຫ້ເປັນປ່າ, ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ໃຫ້ໝາກ ແລະ ຕົ້ນໄມ້ເປັນຢາ;

2.4. ແນວພັນພືດທຸກປະເພດ, ແນວພັນສັດ, ຫົວອາຫານສັດ, ວັກຊິນ, ວັດຖຸດິບຮັບໃຊ້ການຜະລິດຫົວອາຫານສັດ ແລະ ການຜະລິດວັກຊິນ;

2.5. ວັດຖຸດິບ ທີ່ນຳໃຊ້ເຂົ້າໃນການຜະລິດຝຸ່ນ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ, ຝຸ່ນຊີວະພາບ, ຝຸ່ນວິທະຍາສາດ, ຢາປາບສັດຕູພືດ ທີ່ເປັນອັນຕະລາຍໜ້ອຍ ແລະ ບໍ່ມີພິດກະທົບທັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

2.6. ສິນຄ້າ ໃນເຮືອບິນທີ່ບໍລິການຂົນສົ່ງສາກົນທາງອາກາດ;

2.7. ວັດຖຸປະກອບ ແລະ ເຄື່ອງກົນຈັກ ຮັບໃຊ້ວຽກກະສິກຳ;

2.8. ວັດຖຸດິບ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ;

2.9. ສະແຕັມອາກອນ ຫຼື ສະແຕັມໄປສະນີ;

2.10. ການຂົນສົ່ງຜ່ານແດນສາກົນ;

2.11. ປຶ້ມແບບຮຽນ, ແບບສອນ, ອຸປະກອນທີ່ທັນສະໄໝ ເພື່ອຮັບໃຊ້ການຮຽນ ການສອນ, ຮັບໃຊ້ໃນຫ້ອງຄົ້ນຄວ້າ ແລະ ທົດລອງ ທີ່ໄດ້ຮັບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ;

2.12. ໜັງສືພິມ, ວາລະສານການເມືອງ ແລະ ການບໍລິການ ລາຍການໂທລະພາບ, ວິທະຍຸກະຈາຍສຽງ ທີ່ເຜີຍແຜ່ແນວທາງ, ນະໂຍບາຍ ແລະ ຮັບໃຊ້ໜ້າທີ່ການເມືອງຂອງລັດ ບໍ່ມີລັກສະນະທຸລະກິດ;

2.13. ການບໍລິການກ່ຽວກັບການສຶກສາ ແລະ ກິລາ ເປັນຕົ້ນ ໂຮງຮຽນລ້ຽງເດັກ, ໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມ, ໂຮງຮຽນວິຊາຊີບ, ວິທະຍາໄລ, ວິທະຍາຄານ ແລະ ມະຫາວິທະຍາໄລ, ໂຮງຮຽນສອນກິລາ ແລະ ກາຍຍະກຳ;

2.14. ດອກເບ້ຍເງິນຝາກ, ດອກເບ້ຍເງິນກູ້, ລາຍຮັບຈາກການໂອນເງິນ, ກຳໄລຈາກອັດຕາແລກປ່ຽນ ແລະ ທຸລະກຳທາງດ້ານການເງິນອື່ນ ຈາກການເຄື່ອນໄຫວຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

2.15. ຜົນຕອບແທນທີ່ໄດ້ຈາກການລົງທຶນໃນຫຼັກຊັບ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ, ການບໍລິການຂອງຕະຫຼາດຫຼັກຊັບ, ການບໍລິການຂອງສູນຮັບຝາກຫຼັກຊັບ, ການບໍລິການຂອງສະຖາບັນສື່ກາງດ້ານຫຼັກຊັບ ທີ່ໃຫ້ບໍລິການໃນຂົງເຂດວຽກງານຫຼັກຊັບ ແລະ ການບໍລິການອື່ນ ໃນຂົງເຂດວຽກງານຫຼັກຊັບ;

2.16. ກິດຈະການປະກັນໄພ ສຸຂະພາບ, ຊີວິດ, ສັດລ້ຽງ ແລະ ຕົ້ນໄມ້ປູກ;

2.17. ການບໍລິການ ກວດ, ປິ່ນປົວ ແລະ ວິໄຈ ພະຍາດ ຄົນ ແລະ ສັດ;

2.18. ຢາປິ່ນປົວສັດ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງສັດ;

2.19. ຢາພື້ນເມືອງ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງຄົນ, ເລືອດຄົນ, ເຄື່ອງຄ້ຳຊູ, ລໍ້ຮັບໃຊ້ ຄົນເຈັບ, ຄົນພິການ ແລະ ຜູ້ສູງອາຍຸ;

2.20. ເຄື່ອງມື, ອຸປະກອນການແພດ, ເຄື່ອງວິເຄາະຕ່າງໆ ໃຫ້ແກ່ບັນດາໂຮງໝໍ, ສຸກສາລາ ເພື່ອຮັບໃຊ້ບໍລິການສັງຄົມ;

2.21. ສິນຄ້າ ແລະ ການບໍລິການ ໃຫ້ແກ່ໂຄງການຊ່ວຍເຫຼືອລ້າ ຊຶ່ງໄດ້ກຳນົດໄວ້ໃນສັນຍາ, ຂໍ້ຜູກພັນ ທີ່ລັດຖະບານເຊັນກັບຕ່າງປະເທດ;

2.22. ການສະໜອງພະລັງງານໄຟຟ້າພາຍໃນປະເທດ ໃຫ້ວິສາຫະກິດໄຟຟ້າ.

**3. ສຳລັບການສົ່ງອອກ:**

3.1. ການສົ່ງອອກແຮ່ທາດໄປ ຕ່າງປະເທດ ແລະ ເຂດເສດຖະກິດພິເສດ;

3.2 ການສົ່ງອອກພະລັງງານໄຟຟ້າໄປຕ່າງປະເທດ ແລະ ເຂດເສດຖະກິດພິເສດ.

ກະຊວງການເງິນ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກຳນົດບັນຊີລະອຽດກ່ຽວກັບສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ.

**ມາດຕາ 15 ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ**

ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ດັ່ງນີ້:

**1. ສຳລັບສິນຄ້າ ແລະ ການບໍລິການທົ່ວໄປ:**

1.1. ລາຄາຊື້ ຂາຍຕົວຈິງຮອດຊາຍແດນ ບວກພາສີຂາເຂົ້າ ບວກອາກອນຊົມໃຊ້ (ຖ້າມີ) ສຳລັບການນຳເຂົ້າສິນຄ້າ;

1.2. ມູນຄ່າການສະໜອງ ສິນຄ້າ ແລະ ການບໍລິການ ບວກອາກອນຊົມໃຊ້ (ຖ້າມີ) ແຕ່ບໍ່ລວມອາກອນມູນຄ່າເພີ່ມ ສໍາລັບການສະໜອງ ສິນຄ້າ ແລະ ການບໍລິການພາຍໃນປະເທດ;

1.3. ມູນຄ່າການຊື້ການບໍລິການຕົວຈິງ ທີ່ບໍ່ລວມອາກອນມູນຄ່າເພີ່ມ ສໍາລັບການສະໜອງການບໍລິການ ຈາກຜູ້ບໍ່ມີພູມລໍາເນົາ ແລະ ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດຕາມກົດໝາຍຂອງ ສປປ ລາວ;

1.4. ມູນຄ່າຊື້ສິນຄ້າ ແລະ ການບໍລິການຕົວຈິງ ທີ່ບໍ່ລວມອາກອນມູນຄ່າເພີ່ມ ສໍາລັບການສະໜອງ ສິນຄ້າ ແລະ ການບໍລິການ ຈາກຜູ້ມີພູມລໍາເນົາ ແລະ ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ;

1.5. ລາຄາຊື້ ຂາຍຕົວຈິງຮອດຊາຍແດນ ບວກພາສີຂາເຂົ້າ ບວກອາກອນຊົມໃຊ້ (ຖ້າມີ) ບວກກໍາໄລລວມ ສໍາລັບຜູ້ນໍາເຂົ້າສິນຄ້າເພື່ອຊົມໃຊ້ເອງ.

ມູນຄ່າການສະໜອງ ສິນຄ້າ ແລະ ການລິການ ຕາມຕົວຈິງ ຫຼື ທ້ອງຕະຫຼາດບວກ ອາກອນຊົມໃຊ້ (ຖ້າມີ) ສໍາລັບການຊົມໃຊ້ເອງ, ແລກປ່ຽນ ຫຼື ໃຫ້ລ້າ.

ມູນຄ່າການສະໜອງ ສິນຄ້າ ແລະ ການບໍລິການຕົວຈິງ ບວກອາກອນຊົມໃຊ້ (ຖ້າມີ) ສໍາລັບການສະໜອງ ສິນຄ້າ ແລະ ການບໍລິການ ຜ່ານລະບົບເອເລັກໂຕຣນິກ.

**2. ສໍາລັບແຮ່ທາດ:**

2.1. ລາຄາຊື້ ຂາຍຕົວຈິງຮອດດ່ານຊາຍແດນ ຫຼື ລາຄາທີ່ລັດຖະບານກໍານົດບວກພາສີຂາເຂົ້າ ສໍາລັບການນໍາເຂົ້າ;

2.2. ລາຄາຊື້ ຂາຍຕົວຈິງ ຫຼື ລາຄາຕະຫຼາດສາກົນ ຫຼື ລາຄາທີ່ລັດຖະບານກໍານົດ ສໍາລັບການສະໜອງ ຫຼື ຊື້ ຂາຍແຮ່ທາດ ຢູ່ພາຍໃນປະເທດ, ເຂດເສດຖະກິດພິເສດ, ສົ່ງອອກຕ່າງປະເທດ, ການຊົມໃຊ້ເອງ, ແລກປ່ຽນ ຫຼື ໃຫ້ລ້າ.

**3. ສໍາລັບພະລັງງານໄຟຟ້າ:**

3.1. ບໍລິມາດຫົວໜ່ວຍພະລັງງານໄຟຟ້າຕາມໝໍ້ນັບໄຟ ທີ່ບັນທຶກໃນແຕ່ລະເດືອນ ຄູນ ໃຫ້ລາຄາຕາມສັນຍາຊື້ ຂາຍ ພາຍໃນ ຫຼື ຕ່າງປະເທດ ສໍາລັບຜູ້ຜະລິດພະລັງງານໄຟຟ້າ;

3.2. ລາຄາຄ່າພະລັງງານໄຟຟ້າຕາມຂັ້ນການຊົມໃຊ້ພະລັງງານໄຟຟ້າ ທີ່ລັດຖະບານກໍານົດໃນແຕ່ລະໄລຍະ ຫຼື ຕາມສັນຍາຊື້ ຂາຍພະລັງງານໄຟຟ້າ ສໍາລັບວິສາຫະກິດໄຟຟ້າ ແລະ ຜູ້ຊົມໃຊ້;

3.3. ໃນກໍລະນີຜູ້ມອບອາກອນມູນຄ່າເພີ່ມມີລາຍຮັບສໍາຮອງ ກໍໃຫ້ລວມເຂົ້າເປັນພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມອັນດຽວ;

3.4. ຖ້າວ່າລາຍຮັບຈາກການດໍາເນີນທຸລະກິດ ຫາກເປັນເງິນຕາຕ່າງປະເທດກໍໃຫ້ຄິດໄລ່ເປັນເງິນກີບ ຕາມອັດຕາແລກປ່ຽນທາງການຂອງ ສປປ ລາວ ໃນເວລານັ້ນ.

ມາດຕາ 17 ອັດຕາອາກອນມູນຄ່າເພີ່ມ

ອັດຕາອາກອນມູນຄ່າເພີ່ມ ມີ ດັ່ງນີ້:

1. ອັດຕາ ເຈັດສ່ວນຮ້ອຍ (7%):

- ການນໍາເຂົ້າສິນຄ້າ, ການສະໜອງ ສິນຄ້າ ແລະ ການບໍລິການທົ່ວໄປທີ່ຖືກເກັບອາກອນມູນຄ່າເພີ່ມຢູ່ພາຍໃນ ສປປ ລາວ;

- ນຳເຂົ້າແຮ່ທາດ ແລະ ການສະໜອງແຮ່ທາດຢູ່ພາຍໃນປະເທດ;

- ການນຳໃຊ້ພະລັງງານໄຟຟ້າ ສຳລັບຜູ້ຊົມໃຊ້ໄຟຟ້າທົ່ວໄປ, ຜູ້ຜະລິດ, ຜູ້ຈຳໜ່າຍພະລັງງານໄຟຟ້າ.

2. ອັດຕາ ສູນສ່ວນຮ້ອຍ (0%) ສຳລັບການສົ່ງອອກສິນຄ້າໄປຕ່າງປະເທດ.

ໃນກໍລະນີຈຳເປັນ ຕ້ອງໄດ້ປັບປຸງອັດຕາອາກອນມູນຄ່າເພີ່ມ ໃຫ້ປະຕິບັດຕາມ ມາດຕາ 94 ຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ.

**ມາດຕາ 23 ເງື່ອນໄຂຂອງການຫັກອາກອນມູນຄ່າເພີ່ມສົ້ນເຂົ້າ**

ເງື່ອນໄຂຂອງການຫັກອາກອນມູນຄ່າເພີ່ມສົ້ນເຂົ້າ ມີ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ໂດຍມີການແຈ້ງມອບອາກອນມູນຄ່າເພີ່ມເປັນປົກກະຕິແຕ່ລະເດືອນ, ແຈ້ງມອບຜ່ານລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ (TaxRis), ມອບເງິນຜ່ານລະບົບທະນາຄານ ຫຼື ຄັງເງິນແຫ່ງຊາດ,

2. ການຊື້ ຂາຍສິນຄ້າ ແລະ ການບໍລິການ ຕ້ອງຊຳລະຜ່ານລະບົບທະນາຄານ ຢູ່ ສປປ ລາວ;

3. ເອກະສານຢັ້ງຢືນການຂໍຫັກ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນ ໃບເກັບເງິນ, ໃບຮັບເງິນ, ໃບແຈ້ງມີ ແລະ ເອກະສານຢັ້ງຢືນອື່ນ;

4. ອາກອນມູນຄ່າເພີ່ມສົ້ນເຂົ້າ ຕ້ອງເລີ່ມຫັກໃນເດືອນທີ່ມີອາກອນມູນຄ່າເພີ່ມສົ້ນເຂົ້າເກີດຂຶ້ນ ຖ້າຫັກບໍ່ໝົດພາຍໃນເວລາ ສາມເດືອນ ແມ່ນ ສາມາດຂໍຄືນເປັນເງິນໄດ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ມີລາຍຮັບທຸລະກິດປະຈຳປີ ບໍ່ເກີນ ສີ່ຮ້ອຍລ້ານກີບ ໃຫ້ຫັກອາກອນມູນຄ່າເພີ່ມສົ້ນເຂົ້າແບບກຳນົດ ໂດຍກະຊວງການເງິນ ເປັນຜູ້ວາງອອກ.

**ມາດຕາ 24 ອາກອນມູນຄ່າເພີ່ມສົ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ**

ອາກອນມູນຄ່າເພີ່ມສົ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ແມ່ນ ອາກອນມູນຄ່າເພີ່ມທີ່ໄດ້ຈ່າຍໃນເວລານຳເຂົ້າສິນຄ້າ, ຊື້ສິນຄ້າ ແລະ ບໍລິການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ອາກອນມູນຄ່າເພີ່ມສົ້ນເຂົ້າ ທີ່ຕິດພັນກັບການສະໜອງ ທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ;

2. ອາກອນມູນຄ່າເພີ່ມສົ້ນເຂົ້າ ທີ່ໄດ້ຮັບການຫັກ ຫຼື ສົ່ງຄືນ ຫຼື ລົງເປັນລາຍຈ່າຍແລ້ວ;

3. ອາກອນມູນຄ່າເພີ່ມສົ້ນເຂົ້າ ຈາກການປະຕິບັດບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ແລະ ມາດຕາ 23 ຂອງກົດໝາຍສະບັບນີ້;

4. ອາກອນມູນຄ່າເພີ່ມສົ້ນເຂົ້າຈາກ ແຮ່ທາດ ແລະ ພະລັງງານໄຟຟ້າ ແຕ່ອະນຸຍາດໃຫ້ລົງເປັນລາຍຈ່າຍ ແລະ ຕົ້ນທຶນຊັບສົມບັດຄົງທີ່;

5. ອາກອນມູນຄ່າເພີ່ມສິນເຂົ້າຂອງ ສິນຄ້າ ແລະ ການບໍລິການ ທີ່ບໍ່ໄດ້ນຳໃຊ້ໂດຍກົງເຂົ້າໃນການດຳເນີນທຸລະກິດ ຊຶ່ງຕິດພັນກັບລາຍຈ່າຍຂອງຜູ້ມອບອາກອນມູນຄ່າເພີ່ມ ມີ ດັ່ງນີ້:

- ລາຍຈ່າຍທີ່ຕິດພັນກັບ ການຊື້ສິນຄ້າ ແລະ ການບໍລິການ ທີ່ບໍ່ເປັນການດຳເນີນທຸລະກິດໂດຍກົງ ເປັນຕົ້ນ ການຈັດງານລ້ຽງ, ງານສ້າງສັນ, ງານປະເພນີ, ສາສະໜາ, ສິ່ງຫຼູຫຼາ, ຟູມເຟືອຍ, ການພັກຜ່ອນ, ການເຕັ້ນລຳ ຫຼື ບັນເທີງ, ການຕີກ໊ອຟ ແລະ ກິລາອື່ນ, ຂອງຂວັນ, ລາງວັນ;

- ລາຍຈ່າຍນອກທຸລະກິດ ແລະ ລາຍຈ່າຍສ່ວນຕົວຂອງເຈົ້າຂອງທຸລະກິດ, ຜູ້ຖືຮຸ້ນ, ຂາຮຸ້ນ ແລະ ພະນັກງານຂອງຕົນ;

- ລາຍຈ່າຍຂອງທຸລະກິດ ທີ່ບໍ່ມີເອກະສານຢັ້ງຢືນ ຫຼື ມີເອກະສານຢັ້ງຢືນ ແຕ່ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ;

- ລາຍຈ່າຍທີ່ຕິດພັນກັບຊັບສົມບັດຄົງທີ່ ທີ່ບໍ່ໄດ້ຈົດ ຫຼື ໄດ້ຈົດເປັນຊັບສິນຂອງວິສາຫະກິດ ແຕ່ບໍ່ໄດ້ນຳໃຊ້ເຂົ້າໃນການດຳເນີນທຸລະກິດທັງໝົດ ຫຼື ບາງສ່ວນ ເຊັ່ນ ເອົາໃຫ້ຜູ້ຖືຮຸ້ນ, ຜູ້ອຳນວຍການ, ຜູ້ຈັດການ ຫຼື ພະນັກງານ ນຳໃຊ້ສ່ວນຕົວ ຫຼື ມີເກີນຄວາມຕ້ອງການໃນການດຳເນີນທຸລະກິດ;

- ລາຍຈ່າຍທີ່ຕິດພັນກັບ ໄຟຟ້າ, ນ້ຳປະປາ, ນ້ຳມັນເຊື້ອໄຟ, ອາຍແກັດ ສະເພາະອັດຕາສ່ວນທີ່ບໍ່ໄດ້ນຳໃຊ້ໂດຍກົງເຂົ້າໃນການດຳເນີນທຸລະກິດ;

- ລາຍຈ່າຍທີ່ຕິດພັນກັບ ຄອມພິວເຕີ, ໂນດບຸກ, ແທັບເລັດ, ໂທລະສັບມືຖືທີ່ບໍ່ຈົດເປັນຊັບສິນຂອງຜູ້ມອບອາກອນມູນຄ່າເພີ່ມ;

- ສິນຄ້າ ທີ່ນຳໃຊ້ສ່ວນຕົວ ເຊັ່ນ ຢາສູບ, ເຄື່ອງດື່ມທີ່ມີທາດເຫຼົ້າ, ອາຫານ ແລະ ເຄື່ອງດື່ມທຸກຊະນິດ ແລະ ຜະລິດຕະພັນອື່ນ.

6. ອາກອນມູນຄ່າເພີ່ມສິນເຂົ້າທີ່ຫັກບໍ່ໝົດໃນທ້າຍປີ ຂອງການປະຕິບັດອາກອນມູນຄ່າເພີ່ມໃນອັດຕາ ສິບສ່ວນຮ້ອຍ (10%) ຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ແມ່ນບໍ່ອະນຸຍາດໃຫ້ຫັກ ແຕ່ໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນ ຂອງປີການບັນຊີປີນັ້ນ.

### ມາດຕາ 29 ອາກອນມູນຄ່າເພີ່ມທີ່ບໍ່ອະນຸຍາດໃຫ້ສົ່ງຄືນ

ອາກອນມູນຄ່າເພີ່ມທີ່ບໍ່ອະນຸຍາດໃຫ້ສົ່ງຄືນ ມີ ດັ່ງນີ້:

1. ອາກອນມູນຄ່າເພີ່ມສິນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້;

2. ອາກອນມູນຄ່າເພີ່ມທີ່ໃຫ້ຫັກ ຫຼື ສົ່ງຄືນ ແຕ່ປະຕິບັດເງື່ອນໄຂບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48 /ສພຊ, ລົງວັນທີ 20 ມິຖຸນາ 2018;

3. ອາກອນມູນຄ່າເພີ່ມສິນເຂົ້າທີ່ຫັກບໍ່ໝົດໃນສາມເດືອນທ້າຍປີ ຂອງການປະຕິບັດອາກອນມູນຄ່າເພີ່ມໃນອັດຕາ ສິບສ່ວນຮ້ອຍ (10%) ຕາມກົດໝາຍວ່າດ້ວຍອາ

ອາກອນມູນຄ່າເພີ່ມ ສະບັບເລກທີ 48 /ສພຊ, ລົງວັນທີ 20 ມິຖຸນາ 2018 ແມ່ນບໍ່ອະນຸຍາດ ໃຫ້ສົ່ງຄືນ ແຕ່ໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນ ຂອງປີການບັນຊີປີນັ້ນ.

**ມາດຕາ 30 ການແຈ້ງອາກອນມູນຄ່າເພີ່ມ**

ການແຈ້ງອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນທຸລະກິດ ຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງແຈ້ງອາກອນມູນຄ່າເພີ່ມບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ຕໍ່ລັດຖະການສ່ວຍສາອາກອນບ່ອນຕົນຂຶ້ນກັບ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາເຂົ້າສິນຄ້າຕ້ອງແຈ້ງອາກອນມູນຄ່າເພີ່ມໃນເວລາມີການນໍາເຂົ້າສິນຄ້າພ້ອມກັນກັບການແຈ້ງເສຍພາສີຂາເຂົ້າຢູ່ດ່ານບ່ອນນໍາເຂົ້າ.

ລະບຽບການ, ຂັ້ນຕອນ, ແບບພິມໃບແຈ້ງ ແລະ ແບບພິມຕາຕະລາງລາຍງານການນໍາໃຊ້ໃບເກັບເງິນ ລວມທັງການແຈ້ງຜ່ານລະບົບເອເລັກໂຕຣນິກ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 ການມອບອາກອນມູນຄ່າເພີ່ມ**

ການມອບອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ນໍາເຂົ້າສິນຄ້າ ໃຫ້ມອບຢູ່ດ່ານບ່ອນນໍາເຂົ້າສິນຄ້າ ຫຼື ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານທີ່ມີບັນຊີຂອງຄັງເງິນແຫ່ງຊາດ ຫຼື ໃຫ້ມອບໃນເວລາມີການສະໜອງສິນຄ້າຢູ່ພາຍໃນ ຕາມເງື່ອນໄຂທີ່ລັດຖະບານກໍານົດ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ໃຫ້ມອບເປັນແຕ່ລະເດືອນ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ຢູ່ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ;

3. ຜູ້ຊື້ການບໍລິການຈາກຜູ້ບໍ່ມີພູມລໍາເນົາ ແລະ ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ ຫຼື ຜູ້ຊື້ການບໍລິການ ຈາກຜູ້ມີພູມລໍາເນົາບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:

3.1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ໃຫ້ມອບບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ພ້ອມກັບການແຈ້ງມອບໃນແຕ່ລະເດືອນ;

3.2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ໃຫ້ມອບພາຍໃນເວລາ ສິບຫ້າວັນ ນັບແຕ່ວັນຊໍາລະເງິນໃຫ້ແກ່ຜູ້ສະໜອງດັ່ງກ່າວ ເປັນຕົ້ນໄປ.

**ມາດຕາ 34 ການເຂົ້າໃນລະບົບອາກອນມູນຄ່າເພີ່ມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຮັບອະນຸຍາດລົງທຶນຈາກຂະແໜງການກ່ຽວຂ້ອງ ແລະ ໄດ້ຮັບເລກປະຈໍາຕົວຜູ້ເສຍອາກອນ ຕ້ອງໄດ້ເຂົ້າໃນລະບົບອາກອນມູນຄ່າເພີ່ມ ຍົກເວັ້ນຈຸລະວິສາຫະກິດ.

ສໍາລັບຈຸລະວິສາຫະກິດ ທີ່ມີຄວາມສະໝັກໃຈກໍສາມາດເຂົ້າໃນລະບົບອາກອນມູນຄ່າເພີ່ມໄດ້.

**ມາດຕາ 60 ມາດຕະການຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

**ກ. ມາດຕະການສຶກສາອົບຮົມ:**

1. ກ່າວເຕືອນເປັນລາຍລັກອັກສອນ ສຳລັບການບໍ່ປະກອບເລກປະຈຳຕົວຜູ້ເສຍອາກອນໃສ່ໃນການແຈ້ງມອບອາກອນມູນຄ່າເພີ່ມ;

2. ກ່າວເຕືອນເປັນລາຍລັກອັກສອນ ສຳລັບການບໍ່ແຈ້ງການປ່ຽນແປງຂໍ້ມູນຕ່າງໆ ເຊັ່ນ ເລກໂທລະສັບ, ທີ່ຕັ້ງວິສາຫະກິດ ແລະ ອື່ນໆ ໃສ່ໃນການແຈ້ງມອບອາກອນມູນຄ່າເພີ່ມ;

3. ກ່າວເຕືອນເປັນລາຍລັກອັກສອນ ສຳລັບການບໍ່ສະໜອງເອກະສານການບັນຊີ ຫຼື ສະໜອງເອກະສານການບັນຊີທີ່ບໍ່ຖືກຕ້ອງ ແລະ/ຫຼື ບໍ່ຄົບຖ້ວນ, ໃຫ້ຂໍ້ມູນບໍ່ຊັດເຈນ ແລະ/ຫຼື ບໍ່ຖືກຕ້ອງ;

4. ກ່າວເຕືອນເປັນລາຍລັກອັກສອນ ສຳລັບການບໍ່ໃຫ້ຄວາມຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນ.

**ຂ. ມາດຕະການປັບໃໝ:**

1. ປັບໃໝ 500.000 ກີບ ຕໍ່ເດືອນ ສຳລັບການແຈ້ງມອບອາກອນມູນຄ່າເພີ່ມຊັກຊ້າ;

2. ປັບໃໝ 100.000 ກີບ ຕໍ່ຄັ້ງ ສຳລັບການບໍ່ປະກອບເລກປະຈຳຕົວຜູ້ເສຍອາກອນໃສ່ໃນການແຈ້ງມອບອາກອນມູນຄ່າເພີ່ມ ພາຍຫຼັງຖືກກ່າວເຕືອນ;

3. ປັບໃໝ 3.000.000 ກີບ ຕໍ່ຄັ້ງ ສຳລັບການບໍ່ແຈ້ງການປ່ຽນແປງຂໍ້ມູນຕ່າງໆ ເຊັ່ນ ເລກໂທລະສັບ, ທີ່ຕັ້ງວິສາຫະກິດ ແລະ ອື່ນໆ ໃສ່ໃນການແຈ້ງມອບອາກອນມູນຄ່າເພີ່ມ ພາຍຫຼັງຖືກກ່າວເຕືອນ;

4. ປັບໃໝ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນ ຂອງຈຳນວນອາກອນມູນຄ່າເພີ່ມທີ່ຍັງຄ້າງມອບ ສຳລັບການບໍ່ມອບອາກອນມູນຄ່າເພີ່ມທີ່ຕ້ອງມອບຢູ່ໃນການແຈ້ງມອບອາກອນມູນຄ່າເພີ່ມ;

5. ປັບໃໝຕາມລະບຽບການດ້ານບັນຊີ ສຳລັບການບໍ່ປະຕິບັດຕາມມາດຕະຖານການບັນຊີ;

6. ປະຕິບັດມາດຕະການ ຕາມລະບຽບການກ່ຽວກັບໃບເກັບເງິນ ສຳລັບການບໍ່ນຳໃຊ້ໃບເກັບເງິນ ຫຼື ນຳໃຊ້ໃບເກັບເງິນບໍ່ຖືກຕ້ອງ ຫຼື ຂຽນເນື້ອໃນໃສ່ໃບເກັບເງິນບໍ່ຖືກຕ້ອງຄົບຖ້ວນ;

7. ປັບໃໝ 1.500.000 ກີບ ຕໍ່ເດືອນ ສຳລັບການບໍ່ແຈ້ງມອບອາກອນມູນຄ່າເພີ່ມ;

8. ປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງຈຳນວນອາກອນມູນຄ່າເພີ່ມ ທີ່ເຮັດໃຫ້ລັດເກີດຄວາມເສຍຫາຍ ທີ່ເກີດຈາກການບໍ່ແຈ້ງ ຫຼື ແຈ້ງມອບບໍ່ຖືກຕ້ອງກັບຄວາມ

ເປັນຈິງ ເຊັ່ນ ບໍ່ແຈ້ງກ່ຽວກັບການສະໜອງສິນຄ້າ ແລະ ການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ຫຼື ແຈ້ງຕໍ່າກວ່າຄວາມເປັນຈິງ, ຫັກອາກອນມູນຄ່າເພີ່ມສິນເຂົ້າ ທີ່ບໍ່ອະນຸຍາດໃຫ້ຫັກ ຫຼື ຫັກຫຼາຍເກີນຄວາມເປັນຈິງ, ຍົກຍອດອາກອນມູນຄ່າເພີ່ມ ມາຫັກຕໍ່ສູງກວ່າຄວາມຈິງ, ແຈ້ງກ່ຽວກັບການມອບລ່ວງໜ້າ ຫຼື ການມອບເກີນກົດໝາຍກຳນົດ ທີ່ບໍ່ມີຄວາມຈິງ, ບໍ່ແຈ້ງກ່ຽວກັບອາກອນມູນຄ່າເພີ່ມທີ່ຄິດໄລ່ໄວ້ ຫຼື ແຈ້ງຕໍ່າກວ່າກົດໝາຍກຳນົດ;

9. ປັບໃໝ 1.000.000 ກີບ ຕໍ່ການເລັ່ງທວງໜຶ່ງຄັ້ງ ສຳລັບການບໍ່ສະໜອງເອກະສານການບັນຊີ ຫຼື ສະໜອງເອກະສານການບັນຊີທີ່ບໍ່ຖືກຕ້ອງ ແລະ/ຫຼື ບໍ່ຄົບຖ້ວນ, ໃຫ້ຂໍ້ມູນບໍ່ຊັດເຈນ ແລະ/ຫຼື ບໍ່ຖືກຕ້ອງ ພາຍຫຼັງຖືກກ່າວເຕືອນ;

10. ປັບໃໝ 1.000.000 ກີບ ຕໍ່ການລະເມີດໜຶ່ງຄັ້ງ ສຳລັບການບໍ່ໃຫ້ຄວາມຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນ ພາຍຫຼັງຖືກກ່າວເຕືອນ.

ໃນກໍລະນີຜູ້ລະເມີດ ຫາກບໍ່ປະຕິບັດການປັບໃໝ ຕາມຂໍ້ 1, 2, 3, 6, 7, 9 ແລະ 10 ຂອງມາດຕານີ້ ທີ່ໄດ້ມີການເລັ່ງທວງຕາມກົດໝາຍ ໃຫ້ຂະແໜງສ່ວຍສາອາກອນອອກຄຳສັ່ງອາຍັດເງິນໃນບັນຊີເງິນຝາກຢູ່ທະນາຄານທຸລະກິດ ແລະ/ຫຼື ສະຖາບັນການເງິນ ທີ່ກ່ຽວຂ້ອງ ຕັ້ງຢູ່ ສປປ ລາວ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວຊໍາລະຄ່າປັບໃໝ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ. ໃນກໍລະນີບໍ່ປະຕິບັດຕາມກຳນົດເວລາດັ່ງກ່າວ ໃຫ້ຂະແໜງສ່ວຍສາອາກອນສະເໜີທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງ ດຳເນີນການຫັກເງິນໃນບັນຊີເງິນຝາກ ຕາມຈຳນວນເງິນປັບໃໝດັ່ງກ່າວ.

### ມາດຕາ 61 ມາດຕະການຕໍ່ຜູ້ມີອາກອນມູນຄ່າເພີ່ມຄ້າງມອບ

ຜູ້ມີອາກອນມູນຄ່າເພີ່ມຄ້າງມອບ ຕາມມາດຕາ 60 ຂໍ້ 4 ແລະ ຂໍ້ 8 ຂອງຂໍ້ ຂ ກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງຈຳນວນອາກອນມູນຄ່າເພີ່ມທີ່ຕ້ອງມອບ ສຳລັບການເລັ່ງທວງຄັ້ງທີໜຶ່ງ;

2. ປັບໃໝ ຫົກສິບສ່ວນຮ້ອຍ (60%) ຂອງຈຳນວນອາກອນມູນຄ່າເພີ່ມທີ່ຕ້ອງມອບ ສຳລັບການເລັ່ງທວງຄັ້ງທີສອງ;

3. ປັບໃໝ ຮ້ອຍສ່ວນຮ້ອຍ (100%) ຂອງຈຳນວນອາກອນມູນຄ່າເພີ່ມທີ່ຕ້ອງມອບ ສຳລັບການເລັ່ງທວງຄັ້ງທີສາມ.

ໃນກໍລະນີຜູ້ມີອາກອນມູນຄ່າເພີ່ມຄ້າງມອບ ທີ່ລວມມີຄ່າປັບໃໝ ຫາກບໍ່ປະຕິບັດຕາມມາດຕະການດັ່ງກ່າວເທິງນີ້ ຈະຖືກນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ວັກທີສອງ ຂອງກົດໝາຍສະບັບນີ້ ແລະ/ຫຼື ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາໂຈະການດຳເນີນທຸລະກິດ, ຖອນທະບຽນວິສາຫະກິດ, ຖອນໃບອະນຸຍາດລົງທຶນ, ໃບອະນຸຍາດອື່ນ ທີ່ກ່ຽວຂ້ອງ ຫຼື ຈະຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

ກຳນົດເວລາຂອງການເລັ່ງທວງແຕ່ລະຄັ້ງ ແມ່ນ ສິບຫ້າວັນ ນັບແຕ່ວັນອອກໃບເລັ່ງທວງ ແລະ ສົ່ງໃຫ້ຜູ້ມອບອາກອນມູນຄ່າເພີ່ມ ທີ່ຍັງຄ້າງມອບອາກອນມູນຄ່າເພີ່ມ ເປັນຕົ້ນໄປ.

## III. ກົດໝາຍວ່າດ້ວຍອາກອນລາຍໄດ້

### ມາດຕາ 14 ພື້ນຖານຄິດໄລ່ອາກອນກຳໄລ

ພື້ນຖານຄິດໄລ່ອາກອນກຳໄລ ມີ ດັ່ງນີ້:

1. ສຳລັບຜູ້ດຳເນີນທຸລະກິດ ທີ່ຖືບັນຊີຖືກຕ້ອງຕາມມາດຕະຖານການລາຍງານການເງິນ ກຳໄລດ້ານສ່ວຍສາອາກອນ ໃຫ້ຄິດໄລ່ ຕາມກໍລະນີ ດັ່ງນີ້:

- ສ່ວນຜິດດ່ຽງ ລະຫວ່າງ ລາຍຮັບທຸລະກິດປະຈຳປີ ລົບໃຫ້ ລາຍຈ່າຍປະຈຳປີ ທີ່ອະນຸຍາດໃຫ້ເປັນລາຍຈ່າຍທາງດ້ານສ່ວຍສາອາກອນ;
- ກຳໄລດ້ານການບັນຊີ ບວກລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍດ້ານສ່ວຍສາອາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

2. ສຳລັບຜູ້ດຳເນີນທຸລະກິດ ຖືບັນຊີບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ແລະ ຜູ້ບໍ່ມີພູມລຳເນົາທີ່ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ແມ່ນ ກຳໄລລວມແບບບັງຄັບ.

ກຳໄລລວມແບບບັງຄັບ ແມ່ນ ລາຍຮັບທຸລະກິດປະຈຳປີ ຄູນກັບ ອັດຕາສ່ວນກຳໄລລວມແບບບັງຄັບ.

ອັດຕາສ່ວນກຳໄລລວມແບບບັງຄັບ ຂອງແຕ່ລະກິດຈະການ ມີ ດັ່ງນີ້:

ກ. ເຈັດສ່ວນຮ້ອຍ (7%) ສຳລັບການຜະລິດດ້ານກະສິກຳ ແລະ ຫັດຖະກຳ;

ຂ. ສິບສ່ວນຮ້ອຍ (10%) ສຳລັບການຜະລິດດ້ານອຸດສາຫະກຳ ແລະ ອຸດສາຫະກຳປຸງແຕ່ງອື່ນ;

ຄ. ສິບຫ້າສ່ວນຮ້ອຍ (15%) ສຳລັບການຄ້າ ແລະ ການບໍລິການ;

ງ. ສາມສິບສ່ວນຮ້ອຍ (30%) ສຳລັບກິດຈະການ ພະລັງງານໄຟຟ້າ ແລະ ແຮ່ທາດ.

ສຳລັບທຸລະກິດທີ່ດຳເນີນຫຼາຍກິດຈະການ ທີ່ບໍ່ສາມາດແຍກລາຍຮັບເປັນແຕ່ລະປະເພດກິດຈະການໄດ້ໃຫ້ນຳໃຊ້ອັດຕາສ່ວນກຳໄລລວມແບບບັງຄັບຂອງກິດຈະການຕົ້ນຕໍ.

ຜູ້ດຳເນີນທຸລະກິດ ທີ່ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ ທີ່ຖືບັນຊີບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ສາມາດນຳໃຊ້ອັດຕາສ່ວນກຳໄລລວມແບບບັງຄັບໄດ້ພຽງ 1 ປີ ຫຼັງຈາກນັ້ນໃຫ້ປະຕິບັດການຖືບັນຊີໃຫ້ຖືກຕ້ອງຕາມມາດຕະຖານການລາຍງານການເງິນ. ຖ້າບໍ່ປະຕິບັດການຖືບັນຊີ ໃຫ້ນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ແລະ ມາດຕາ 73 ຂອງກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບວິທີກຳນົດພື້ນຖານຄິດໄລ່ອາກອນກຳໄລລວມແບບບັງຄັບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 16 ອັດຕາອາກອນກໍາໄລ ເພີ່ມ ຫຼື ຫຼຸດ

1. ອັດຕາອາກອນກໍາໄລເພີ່ມ

- ອັດຕາ ຊາວສອງສ່ວນຮ້ອຍ (22%) ສໍາລັບວິສາຫະກິດທີ່ຜະລິດ, ນໍາເຂົ້າ ແລະ ຂາຍຜະລິດ ຕະພັນຢາສູບ ຊຶ່ງໃນນີ້ ສອງສ່ວນຮ້ອຍ (2%) ຕ້ອງໄດ້ມອບເຂົ້າກອງທຶນຄວບຄຸມຢາສູບ ຕາມກົດໝາຍວ່າດ້ວຍການຄວບຄຸມຢາສູບ;

2. ອັດຕາອາກອນກໍາໄລຫຼຸດ

- ອັດຕາ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ສໍາລັບຈຸລະວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງໄດ້ສະໝັກໃຈເຂົ້າໃນລະບົບອາກອນມູນຄ່າເພີ່ມ;

- ອັດຕາ ສາມສ່ວນຮ້ອຍ (3%) ໄລຍະເວລາ 3 ປີ ສໍາລັບວິສາຫະກິດຂະໜາດນ້ອຍ ທີ່ສ້າງຕັ້ງຂຶ້ນໃໝ່ ຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງເຂົ້າໃນລະບົບອາກອນມູນຄ່າເພີ່ມ;

- ອັດຕາ ຫ້າສ່ວນຮ້ອຍ (5%) ໄລຍະເວລາ 3 ປີ ສໍາລັບວິສາຫະກິດຂະໜາດກາງ ທີ່ສ້າງຕັ້ງຂຶ້ນໃໝ່ ຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງເຂົ້າໃນລະບົບອາກອນມູນຄ່າເພີ່ມ;

- ອັດຕາ ຫ້າສ່ວນຮ້ອຍ (5%) ສໍາລັບການດໍາເນີນທຸລະກິດ ທີ່ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ເປັນຕົ້ນ ໂຮງຮຽນ, ສູນຝຶກອົບຮົມ, ການຄົ້ນຄວ້ານະວັດຕະກໍາ ແລະ ກິດຈະການສຶກສາອື່ນ ແລະ ການດໍາເນີນທຸລະກິດທີ່ຕິດພັນກັບ ການສ້າງໂຮງໝໍທັນສະໄໝ, ໂຮງງານຜະລິດຢາ ແລະ ອຸປະກອນທາງການແພດ, ການຜະລິດ ແລະ ປິ່ນປົວດ້ວຍຢາພື້ນເມືອງ ພາຍຫຼັງສິ້ນສຸດໄລຍະຍົກເວັ້ນອາກອນກໍາໄລ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

- ອັດຕາ ເຈັດສ່ວນຮ້ອຍ (7%) ສໍາລັບການດໍາເນີນທຸລະກິດ ທີ່ນໍາໃຊ້ເຕັກໂນໂລຊີທີ່ໄດ້ຈາກນະວັດຕະກໍາ, ເປັນມິດຕໍ່ສິ່ງແວດລ້ອມ, ປະຢັດຊັບພະຍາກອນທໍາມະຊາດ ແລະ ພະລັງງານສະອາດເຂົ້າໃນການຜະລິດ ພາຍຫຼັງສິ້ນສຸດໄລຍະຍົກເວັ້ນອາກອນກໍາໄລ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

- ອັດຕາ ສິບສາມສ່ວນຮ້ອຍ (13%) ສໍາລັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເປັນໄລຍະເວລາ ສີ່ປີ ນັບແຕ່ວັນຈົດທະບຽນເປັນຕົ້ນໄປ. ຫຼັງຈາກນັ້ນໃຫ້ປະຕິບັດຕາມອັດຕາອາກອນກໍາໄລ ຊາວສ່ວນຮ້ອຍ (20%) ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019.

ສໍາລັບວິສາຫະກິດ ທີ່ຖືບັນຊີບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ແລະ ຜູ້ບໍ່ມີພູມລໍາເນົາ ທີ່ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ນໍາໃຊ້ອັດຕາອາກອນກໍາໄລຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ແລະ ອັດຕາອາກອນກໍາໄລ ເພີ່ມ ຫຼື ຫຼຸດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 18 ລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍດ້ານສ່ວຍສາອາກອນ**

ລາຍການທີ່ບໍ່ອະນຸຍາດ ໃຫ້ເປັນລາຍຈ່າຍດ້ານສ່ວຍສາອາກອນ ມີ ດັ່ງນີ້:

1. ອາກອນກຳໄລ;

2. ອາກອນມູນຄ່າເພີ່ມສົ່ງເຂົ້າ ຂອງຊັບສົມບັດຄົງທີ່ ທີ່ນຳໃຊ້ໂດຍກົງເຂົ້າໃນການດຳເນີນທຸລະກິດ;

3. ຄ່າຫຼຸ້ຍຫ້ຽນທີ່ຫັກເກີນອັດຕາ ຫຼື ອາຍຸ ການນຳໃຊ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;

4. ໜີ້ຕ້ອງຮັບເກັບຄືນບໍ່ໄດ້ ທີ່ບໍ່ມີຫຼັກຖານ ຫຼື ບໍ່ມີເອກະສານຢັ້ງຢືນ ຈາກຂະແໜງການ, ບຸກຄົນ, ນິຕິບຸກຄົນ ທີ່ກ່ຽວຂ້ອງ;

5. ຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ ທີ່ບໍ່ໄດ້ຈົດເຂົ້າເປັນຊັບສິນຂອງວິສາຫະກິດ;

6. ເງິນເດືອນຂອງເຈົ້າຂອງວິສາຫະກິດສ່ວນບຸກຄົນ ຫຼື ເງິນເດືອນ ທີ່ວິສາຫະກິດຮຸ້ນສ່ວນ ຈ່າຍໃຫ້ແກ່ຂາຮຸ້ນຂອງຕົນ ທີ່ບໍ່ມີຕຳແໜ່ງງານ ບໍ່ໄດ້ເຮັດວຽກໃນວິສາຫະກິດຮຸ້ນສ່ວນ;

7. ລາຍຈ່າຍທີ່ບໍ່ຕິດພັນກັບການດຳເນີນທຸລະກິດ ເຊັ່ນ ການຕີກ໊ອຟ, ການບັນເທີງ, ຂອງຂວັນ, ລາງວັນ;

8. ລາຍຈ່າຍສ່ວນຕົວຂອງເຈົ້າຂອງວິສາຫະກິດ ຫຼື ຂາຮຸ້ນ;

9. ລາຍຈ່າຍທີ່ບໍ່ມີໃບເກັບເງິນ ຕາມຮູບແບບທີ່ກະຊວງການເງິນກຳນົດ ຫຼື ບໍ່ມີເອກະສານຢັ້ງຢືນ ຫຼື ມີເອກະສານຢັ້ງຢືນ ແຕ່ບໍ່ຖືກຕ້ອງ;

10. ລາຍຈ່າຍທີ່ມີໃບເກັບເງິນ ຫຼື ມີເອກະສານຢັ້ງຢືນທີ່ຖືກຕ້ອງ ແຕ່ບໍ່ໄດ້ປະກອບຂໍ້ມູນເຂົ້າໃສ່ໃບແຈ້ງອາກອນມູນຄ່າເພີ່ມໃນແຕ່ລະເດືອນ;

11. ລາຍຈ່າຍທີ່ສູງກວ່າລາຄາຕະຫຼາດ, ມີປະລິມານຫຼາຍ ແລະ ມູນຄ່າສູງ ທີ່ບໍ່ສົມເຫດສົມຜົນ;

12. ເງິນແຮທຸກປະເພດທີ່ບໍ່ໄດ້ໃຊ້ຈ່າຍຕົວຈິງ, ຍົກເວັ້ນທະນາຄານ ແລະ ສະຖາບັນການເງິນອື່ນ;

13. ການຫັກຄ່າສູນເສຍມູນຄ່າຊັບສິນ (ຄ່າສູນເສຍມູນຄ່າຊັບສົມບັດຄົງທີ່, ເຄື່ອງໃນສາງ, ໜີ້ທວງຍາກ ແລະ ອື່ນໆ);

14. ດອກເບ້ຍເງິນກູ້ຢືມ ຊຶ່ງຂາຮຸ້ນ ຫຼື ຜູ້ຖືຮຸ້ນ ກູ້ຢືມມາ ເພື່ອປະກອບທຶນ;

15. ການຂາດທຶນຈາກການປະເມີນມູນຄ່າຊັບສິນ ແລະ ໜີ້ສິນ ໃນວັນປິດບັນຊີ;

16. ລາຍຈ່າຍອາກອນເຍື້ອນຊຳລະ;

17. ຄ່າປັບໃໝທຸກປະເພດ;

18. ການຂາດທຶນອັດຕາແລກປ່ຽນ ທີ່ເກີດຈາກການປະເມີນມູນຄ່າຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດ ໃນວັນປິດບັນຊີທ້າຍງວດ ຫຼື ປີ.

ສໍາລັບລາຍຈ່າຍທີ່ອະນຸຍາດໃຫ້ເປັນລາຍຈ່າຍດ້ານສ່ວຍສາອາກອນ ຂອງກິດຈະການພະລັງງານໄຟຟ້າ ແລະ ແຮ່ທາດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 73 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນທຸລະກິດ ຫຼື ມີລາຍໄດ້ ຢູ່ ສປປ ລາວ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນລາຍໄດ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝ 100.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ປະກອບເລກປະຈໍາຕົວຜູ້ເສຍອາກອນ ໃສ່ໃນການແຈ້ງມອບອາກອນລາຍໄດ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

2. ປັບໃໝ 500.000 ກີບ ຕໍ່ຄັ້ງ ສໍາລັບການແຈ້ງເສຍອາກອນລາຍໄດ້ຊັກຊ້າ ບໍ່ຖືກຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍ;

3. ປັບໃໝ 1.000.000 ກີບ ຕໍ່ການເລັ່ງທວງໜຶ່ງຄັ້ງ ສໍາລັບການບໍ່ສະໜອງເອກະສານ, ຂໍ້ມູນ ກ່ຽວກັບວຽກງານອາກອນລາຍໄດ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

4. ປັບໃໝ 1.500.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ແຈ້ງເສຍອາກອນລາຍໄດ້ ຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍ;

5. ປັບໃໝ 3.000.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ແຈ້ງການປ່ຽນແປງຂໍ້ມູນ ເປັນຕົ້ນ ທີ່ຕັ້ງວິສາຫະກິດ, ເລກໂທລະສັບ ແລະ ຂໍ້ມູນອື່ນ ໃສ່ໃນການແຈ້ງມອບອາກອນລາຍໄດ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

6. ປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງຈໍານວນອາກອນລາຍໄດ້ທີ່ຕ້ອງມອບຕື່ມ ຈາກການແຈ້ງເສຍບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ບໍ່ຄົບຖ້ວນ;

7. ປັບໃໝ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນ ຂອງຈໍານວນອາກອນລາຍໄດ້ ທີ່ມອບຊັກຊ້າ ຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍ;

8. ສໍາລັບຈໍານວນອາກອນລາຍໄດ້ທີ່ຍັງຄ້າງມອບ ຈະຖືກປະຕິບັດມາດຕະການປັບໃໝ ດັ່ງນີ້:

- ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງຈໍານວນອາກອນລາຍໄດ້ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີໜຶ່ງ;
- ປັບໃໝ ຫົກສິບສ່ວນຮ້ອຍ (60%) ຂອງຈໍານວນອາກອນລາຍໄດ້ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີສອງ;
- ປັບໃໝ ຮ້ອຍສ່ວນຮ້ອຍ (100%) ຂອງຈໍານວນອາກອນລາຍໄດ້ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີສາມ.

ໃນກໍລະນີຜູ້ລະເມີດ ຫາກບໍ່ປະຕິບັດອາກອນທີ່ຕ້ອງມອບ ແລະ/ຫຼື ຄ່າປັບໃໝ ທີ່ໄດ້ມີການເລັ່ງທວງຕາມກົດໝາຍ ໃຫ້ຂະແໜງສ່ວຍສາອາກອນ ອອກຄໍາສັ່ງອາຍັດເງິນໃນບັນຊີເງິນຝາກຢູ່ທະນາຄານທຸລະກິດ ແລະ/ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງ ຕັ້ງຢູ່ ສປປ

ລາວ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວຊໍາລະຄ່າປັບໃໝ ພາຍໃນກໍານົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ. ໃນກໍລະນີບໍ່ປະຕິບັດຕາມກໍານົດເວລາດັ່ງກ່າວ ໃຫ້ຂະແໜງສ່ວຍສາອາກອນ ສະໜີທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງດໍາເນີນການຫັກເງິນໃນບັນຊີເງິນຝາກ ຕາມຈໍານວນເງິນປັບໃໝດັ່ງກ່າວ ແລະ /ຫຼື ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາ ໂຈະການດໍາເນີນທຸລະກິດ, ຖອນທະບຽນວິສາຫະກິດ, ຖອນໃບອະນຸຍາດລົງທຶນ, ໃບອະນຸຍາດອື່ນທີ່ກ່ຽວຂ້ອງ ຫຼື ຈະຖືກລົງໂທດຕາມກົດໝາຍ ແລ້ວ ແຕ່ກໍລະນີ ເບົາ ຫຼື ໜັກ.

ກໍານົດເວລາຂອງການເລັ່ງທວງແຕ່ລະຄັ້ງ ແມ່ນ ສິບຫ້າວັນ ນັບແຕ່ວັນອອກໃບເລັ່ງທວງ ແລະ ສົ່ງໃຫ້ຜູ້ມອບອາກອນລາຍໄດ້ ທີ່ຍັງຄ້າງມອບອາກອນລາຍໄດ້ ເປັນຕົ້ນໄປ.

## IV. ກົດໝາຍວ່າດ້ວຍອາກອນຊົມໃຊ້

### ມາດຕາ 15 ອັດຕາອາກອນຊົມໃຊ້

ອັດຕາອາກອນຊົມໃຊ້ ໄດ້ກໍານົດຕາມປະເພດສິນຄ້າ ແລະ ການບໍລິການ ມີ ດັ່ງນີ້:

**1. ອັດຕາກອນຊົມໃຊ້ສໍາລັບສິນຄ້າ:**

| ລ/ດ | | ປະເພດສິນຄ້າທົ່ວໄປທີ່ຖືກເສຍອາກອນຊົມໃຊ້ | ອັດຕາທຽບຖານເປັນສ່ວນຮ້ອຍ (%) | | |
|---|---|---|---|---|---|
| 1 | ນໍ້າມັນເຊື້ອໄຟ | | | | |
| | 1) | ນໍ້າມັນແອັດຊັງພິເສດ | 40% | | |
| | 2) | ນໍ້າມັນແອັດຊັງທໍາມະດາ | 31% | | |
| | 3) | ນໍ້າມັນກາຊວນ | 21% | | |
| | 4) | ນໍ້າມັນກາດ | 8% | | |
| | 5) | ນໍ້າມັນເຕົາ, ນໍ້າມັນເຄື່ອງ, ນໍ້າມັນໄຮໂດລິກ, ນໍ້າມັນໜຽວ ແລະ ນໍ້າມັນຫ້າມລໍ້ | 5% | | |
| 2 | ພາຫະນະ | | | | |
| | 1) | ລົດຈັກ | | | |
| | 1.1 | ລົດຈັກ ທີ່ນໍາໃຊ້ພະລັງງານເຊື້ອໄຟ | | | |
| | | ລາຍການ | ຊີບີຢູ | ຊີເຄດີ | ໄອເຄດີ |
| | | ແຕ່ 110 ເຊເຊ ລົງມາ | 10% | 6% | 3% |
| | | ເກີນ 110 ຫາ 150 ເຊເຊ | 20% | ສໍາລັບຄວາມແຮງເກີນ 110 ເຊເຊ ຂຶ້ນໄປໃຫ້ເກັບ | |
| | | ເກີນ 150 ຫາ 200 ເຊເຊ | 28% | | |
| | | ເກີນ 200 ຫາ 250 ເຊເຊ | 39% | | |

| | | | | |
|---|---|---|---|---|
| | | ເກີນ 250 ຫາ 500 ເຊເຊ | 75% | ຕາມ<br>ອັດຕາ ຊີບີຢູ |
| | | ເກີນ 500 ຫາ 800 ເຊເຊ | 100% | |
| | | ເກີນ 800 ເຊເຊ ຂຶ້ນໄປ | 110% | |
| | 2) | ລົດໃຫຍ່ | | |
| | 2.1 | ລົດຂົນສົ່ງຂະໜາດນ້ອຍ | | |
| | 2.1.1 | ລົດຂົນສົ່ງໂດຍສານປະເພດ ລົດເກັງ, ລົດຈິບ, ລົດຕູ້, ລົດກະບະສີ່ປະຕູ ຂຶ້ນໄປ | | |
| | 2.1.1.1 | ທີ່ນຳໃຊ້ພະລັງງານເຊື້ອໄຟ | | |
| | | ແຕ່ 1.000 ເຊເຊ ລົງມາ | 26% | |
| | | ເກີນ 1.000 ຫາ 1.600 ເຊເຊ | 31% | |
| | | ເກີນ 1.600 ຫາ 2.000 ເຊເຊ | 36% | |
| | | ເກີນ 2.000 ຫາ 2.500 ເຊເຊ | 41% | |
| | | ເກີນ 2.500 ຫາ 3.000 ເຊເຊ | 52% | |
| | | ເກີນ 3.000 ຫາ 4.000 ເຊເຊ | 77% | |
| | | ເກີນ 4.000 ຫາ 5.000 ເຊເຊ | 92% | |
| | | ເກີນ 5.000 ເຊເຊ ຂຶ້ນໄປ | 102% | |
| | 2.1.1.2 | ລົດຂົນສົ່ງໂດຍສານທີ່ນຳໃຊ້ພະລັງງານສອງລະບົບຄືພະລັງງານເຊື້ອໄຟ ແລະ ພະລັງງານທົດແທນອື່ນ | 50% ຂອງອັດຕາຕາມຄວາມແຮງທີ່ໄດ້ກຳນົດໄວ້ໃນຂໍ້ 2.1.1.1 | |
| | 2.1.1.3 | ລົດຂົນສົ່ງໂດຍສານທີ່ນຳໃຊ້ພະລັງງານສະອາດ | 3% | |
| | 2.1.2 | ລົດຂົນສົ່ງສິນຄ້າ ປະເພດ ລົດກະບະ 2 ປະຕູ ແລະ ລົດກະບະ 2 ປະຕູເຄິ່ງ | | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 16% | |
| | | ທີ່ນຳໃຊ້ພະລັງງານສະອາດ | 3% | |
| | 2.1.3 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດນ້ອຍອື່ນ | | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 11% | |
| | | ທີ່ນຳໃຊ້ພະລັງງານສະອາດ | 3% | |
| | 2.2 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດກາງ | | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 9% | |
| | | ທີ່ນຳໃຊ້ພະລັງງານສະອາດ | 3% | |
| | 2.3 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດໃຫຍ່ | | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 5% | |

| | | | |
|---|---|---|---|
| | | ທີ່ນຳໃຊ້ພະລັງງານສະອາດ | 3% |
| | 2.4 | ລົດຕູ້ແຊ່ເຢັນ, ລົດບັນທຸກ, ຂອງແຫຼວ ຫຼື ອາຍແກັສ ຫຼື ຊີມັງຜົງ, ລົດບັນທຸກນໍ້າມັນ, ລົດນໍ້າ, ລົດເຄນ, ລົດຟອກລິບ, ລົດໄມ້ຊີມັງ, ລົດດູດອິດ, ລົດສີດຊີມັງ, ລົດສີດຜົ່ນທຸກຊະນິດ ແລະ ລົດເຮືອນເຄື່ອນທີ່ | 10% |
| | 2.5 | ລົດຫົວລາກ, ຫາງລາກ ແລະ ເຄິ່ງຫາງລາກ | 5% |
| | 2.6 | ລົດກ໊ອຟ ແລະ ລົດຮັບໃຊ້ສະໜາມກ໊ອຟ | 15% |
| | 2.7 | ລົດທ່ຽວຊົມສະເພາະໃນແຫຼ່ງທ່ອງທ່ຽວ | 5% |
| | 2.8 | ລົດຈັກສີ່ລໍ້ (ATV) ແລະ ລົດໂກຄາດ (Gokart) | 25% |
| | 2.9 | ສຳລັບລົດໃຫຍ່ ທີ່ນຳໃຊ້ພະລັງງານເຊື້ອໄຟ ທີ່ຜະລິດ ຫຼື ປະກອບ ຢູ່ໃນລະບົບໂຮງງານພາຍໃນປະເທດໃນຮູບແບບ ຊີເຄດີ ໃຫ້ເກັບໃນອັດຕາ 5% ແລະ ໄອເຄດີ ໃຫ້ເກັບໃນອັດຕາ 3% | |
| 3 | ຊິ້ນສ່ວນປະກອບ ນຳເຂົ້າເພື່ອມາປະກອບ ທີ່ບໍ່ຢູ່ໃນລະບົບໂຮງງານພາຍໃນປະເທດ ແລະ ເຄື່ອງອາໄຫຼ່ປ່ຽນຖ່າຍ | | |
| | ລົດຈັກ | | 6% |
| | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ທຸກຊະນິດ | | 11% |
| 4 | ເຄື່ອງຕົບແຕ່ງພາຫະນະ | | |
| | ເຄື່ອງສຽງ | | 25% |
| | ເຄື່ອງປະດັບເອ້ພາຫະນະ | | 20% |
| 5 | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ | | |
| | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ເກີນ 23 ສ່ວນຮ້ອຍ | | 80% |
| | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າແຕ່ 23 ສ່ວນຮ້ອຍລົງມາ ຫາ 10 ສ່ວນຮ້ອຍ | | 70% |
| | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຕໍ່າກວ່າ 10 ສ່ວນຮ້ອຍລົງມາ | | 62% |
| 6 | ເບຍ | | |
| | ເບຍທີ່ມີທາດເຫຼົ້າ 0,5 ສ່ວນຮ້ອຍ ຂຶ້ນໄປ | | 60% |
| | ເບຍທີ່ມີທາດເຫຼົ້າ ຕໍ່າກ່ວາ 0,5 ສ່ວນຮ້ອຍ ລົງມາ | | 20% |
| 7 | ປະເພດຢາສູບ | | |
| | ຢາຊິກາ, ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນ | | 57% |
| | ຢາເສັ້ນ | | 42% |
| 8 | ອາຍແກັສສຳລັບຍານພາຫະນາ | | 10% |
| 9 | ເຄື່ອງດື່ມສຳເລັດຮູບ | | |

| | | |
|---|---|---|
| | ນ້ຳອັດລົມ, ໂຊດາ, ເຄື່ອງດື່ມປະເພດກາເຟ ແລະ ເຄື່ອງດື່ມທີ່ຄ້າຍຄຽງ | 7% |
| | ເຄື່ອງດື່ມຊູກຳລັງ | 12% |
| 10 | ເຄື່ອງແກ້ວຄຣິສເຕັ້ນທີ່ເປັນເຄື່ອງໃຊ້ ແລະ ປະດັບ,ໂຄມໄຟປະດັບ | 25% |
| 11 | ຜ້າຮົ່ມທີ່ເຮັດດ້ວຍຂົນແກະ ຫຼື ຂົນລະອຽດຂອງສັດ | 20% |
| 12 | ນ້ຳຫອມ, ຜະລິດຕະພັນເຄື່ອງສຳອາງ, ອຸປະກອນຮັບໃຊ້ການເສີມສວຍ ແລະ ຄວາມງາມ | 25% |
| 13 | ໄພ້ ແລະ ອຸປະກອນການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 100% |
| 14 | ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 85% |
| 15 | ເຮືອໄວ, ເຮືອຢອດ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ | 25% |
| 16 | ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ | 15% |
| 17 | ເຄື່ອງຫຼິ້ນ ສຽງ ແລະ ພາບ, ກ້ອງຖ່າຍຮູບ, ໂທລະສັບ, ເຄື່ອງອັດສຽງ ແລະ ພາບ, ເຄື່ອງດົນຕີ | 15% |
| 18 | ເຮືອບິນບໍ່ມີຄົນຂັບ, ເຄື່ອງຖ່າຍພາບອາກາດ, ເຄື່ອງບິນດ້ວຍຈ້ອງ ແລະ ເຄື່ອງຈັກໄອພົ່ນຂະໜາດນ້ອຍ | 25% |
| 19 | ໂຕະບິນລຽດ, ໂຕະສະນຸກເກີ, ອຸປະກອນໂບລິ້ງ, ໂຕະຫຼິ້ນບານເຕະ | 35% |
| 20 | ຕູ້ເກມຢອດຫຼຽນ, ເຄື່ອງຫຼິ້ນເກມທຸກຊະນິດ ແລະ ເຄື່ອງຫຼິ້ນເກມການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | (ມີອັດຕາສະເພາະຕາມບຸຽບການ) |

**2. ອັດຕາອາກອນຊົມໃຊ້ສຳລັບການບໍລິການ:**

| ລ/ດ | ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາທຽບຖານເປັນສ່ວນຮ້ອຍ (%) | |
|---|---|---|---|
| 1 | ການບັນເທີງ: ໂຮງເຕັ້ນລຳ, ດິສໂກເທກ, ຄາຣາໂອເກະ | 40% | |
| 2 | ກິດຈະການໂບລິ້ງ | 24% | |
| 3 | ກິດຈະການສັນຍະກຳເສີມສວຍຄວາມງາມ | 13% | |
| 4 | ກິດຈະການບໍລິການໂທລະສັບ, ສັນຍານໂທລະພາບສາຍໄຍແກ້ວ, ສັນຍານໂທລະພາບດິຈິຕອນ | 5% | |
| 5 | ກິດຈະການບໍລິການອິນເຕີເນັດ | ປີ 2022 | ປີ 2023 ເປັນຕົ້ນໄປ |
| | | 2% | 0% |
| 6 | ກິດຈະການສະໜາມກ໊ອຟ | 25% | |
| 7 | ກິດຈະການຫວຍ | 30% | |

| | | |
|---|---|---|
| 8 | ກິດຈະການກາຊິໂນ ແລະ ຕູ້ຢອດຫຼຽນ ແລະ ຫຼິ້ນເກມທຸກປະເພດ | (ມີອັດຕາສະເພາະຕາມບຽບການ) |
| 9 | ກິດຈະການ ແຂ່ງລົດ, ແຂ່ງມ້າ, ຕີໄກ່ | 30% |
| 10 | ກິດຈະການ ບາລູນ, ບໍລິການບິນດ້ວຍຈ້ອງ ຫຼື ຈັກອາຍພົ່ນຂະໜາດນ້ອຍ, ບໍລິການຖ່າຍພາບທາງອາກາດ | 12% |

**ມາດຕາ 17 ກຳນົດເວລາຄິດໄລ່ເກັບອາກອນຊົມໃຊ້**

ກຳນົດເວລາຄິດໄລ່ເກັບອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ການນຳເຂົ້າສິນຄ້າ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາແຈ້ງເສຍພາສີຂາເຂົ້າ ຫຼື ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາມີການສະໜອງຢູ່ພາຍໃນ ຕາມເງື່ອນໄຂທີ່ລັດຖະບານກຳນົດ;

- ການສະໜອງ ສິນຄ້າ ແລະ/ຫຼື ບໍລິການ ຢູ່ພາຍໃນປະເທດ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາມີການສະໜອງຕົວຈິງ;

- ການສະໜອງ ສິນຄ້າ ແລະ/ຫຼື ບໍລິການ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາມີການຊື້ ແລະ/ຫຼື ການບໍລິການຕົວຈິງ.

**ມາດຕາ 18 ການແຈ້ງເສຍ ແລະ ການມອບອາກອນຊົມໃຊ້**

ຜູ້ນຳເຂົ້າສິນຄ້າ, ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019 ມີໜ້າທີ່ແຈ້ງເສຍອາກອນຊົມໃຊ້ ດັ່ງນີ້:

- ຜູ້ນຳເຂົ້າສິນຄ້າ ຕ້ອງແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ ໃນເວລາແຈ້ງເສຍພາສີຂາເຂົ້າຢູ່ດ່ານພາສີ ຫຼື ມອບອາກອນຊົມໃຊ້ໃນເວລາມີການສະໜອງສິນຄ້າ ຢູ່ພາຍໃນປະເທດ ຕາມເງື່ອນໄຂທີ່ລັດຖະບານກຳນົດ;

- ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ຢູ່ພາຍໃນປະເທດ ຕ້ອງແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ທຸກເດືອນ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ ຕໍ່ຂະແໜງສ່ວຍສາອາກອນບ່ອນຕົນຂຶ້ນກັບ;

- ຜູ້ຊື້ສິນຄ້າ ແລະ/ຫຼື ບໍລິການ ທີ່ເປັນຜູ້ດຳເນີນທຸລະກິດຢູ່ພາຍໃນປະເທດ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ. ສຳລັບຜູ້ຊື້ທີ່ເປັນບຸກຄົນທົ່ວໄປໃຫ້ແຈ້ງເສຍອາກອນຊົມໃຊ້ບໍ່ໃຫ້ກາຍ ສິບຫ້າວັນ ນັບແຕ່ວັນໄດ້ຄິດໄລ່ເກັບອາກອນເປັນຕົ້ນໄປ.

ການມອບອາກອນຊົມໃຊ້ ໃຫ້ມອບຜ່ານ ທະນາຄານທຸລະກິດ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ ຫຼື ຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງຊາດປະຈຳ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ.

ມາດຕາ 38 ມາດຕະການປັບໃໝ

ຜູ້ມອບອາກອນ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນຊົມໃຊ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝ 100.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ປະກອບເລກປະຈໍາຕົວຜູ້ເສຍອາກອນໃສ່ໃນການແຈ້ງມອບອາກອນຊົມໃຊ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

2. ປັບໃໝ 500.000 ກີບ ຕໍ່ຄັ້ງ ສໍາລັບການແຈ້ງເສຍອາກອນຊົມໃຊ້ຊັກຊ້າ ບໍ່ຖືກຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍສະບັບນີ້;

3. ປັບໃໝ 1.000.000 ກີບ ຕໍ່ການເລັ່ງທວງໜຶ່ງຄັ້ງ ສໍາລັບການບໍ່ສະໜອງເອກະສານ, ຂໍ້ມູນ ກ່ຽວກັບວຽກງານອາກອນຊົມໃຊ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

4. ປັບໃໝ 1.500.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ແຈ້ງເສຍອາກອນຊົມໃຊ້ ຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍສະບັບນີ້;

5. ປັບໃໝ 3.000.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ແຈ້ງການປ່ຽນແປງຂໍ້ມູນ ເປັນຕົ້ນ ທີ່ຕັ້ງວິສາຫະກິດ, ເລກໂທລະສັບ ແລະ ຂໍ້ມູນອື່ນ ໃສ່ໃນການແຈ້ງມອບອາກອນຊົມໃຊ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

6. ປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າອາກອນຊົມໃຊ້ທີ່ແຈ້ງເສຍບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ບໍ່ຄົບຖ້ວນ;

7. ປັບໃໝ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນ ຂອງຈໍານວນອາກອນຊົມໃຊ້ທີ່ມອບຊັກຊ້າ ຕາມກໍານົດເວລາ ທີ່ກໍານົດໄວ້ໃນກົດໝາຍສະບັບນີ້;

8. ສໍາລັບຈໍານວນອາກອນຊົມໃຊ້ ທີ່ຍັງຄ້າງມອບ ຈະຖືກປະຕິບັດມາດຕະການປັບໃໝ ດັ່ງນີ້:

- ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງຈໍານວນອາກອນຊົມໃຊ້ ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີໜຶ່ງ;
- ປັບໃໝ ຫົກສິບສ່ວນຮ້ອຍ (60%) ຂອງຈໍານວນອາກອນຊົມໃຊ້ ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີສອງ;
- ປັບໃໝ ຮ້ອຍສ່ວນຮ້ອຍ (100%) ຂອງຈໍານວນອາກອນຊົມໃຊ້ ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີສາມ.

ໃນກໍລະນີຜູ້ລະເມີດ ຫາກບໍ່ປະຕິບັດອາກອນທີ່ຕ້ອງມອບ ແລະ/ຫຼື ຄ່າປັບໃໝ ທີ່ໄດ້ມີການເລັ່ງທວງຕາມກົດໝາຍ ໃຫ້ຂະແໜງສ່ວຍສາອາກອນ ອອກຄໍາສັ່ງອາຍັດເງິນໃນບັນຊີເງິນຝາກຢູ່ທະນາຄານທຸລະກິດ ແລະ/ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງ ຕັ້ງຢູ່ ສປປ ລາວ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ຊໍາລະຄ່າປັບໃໝ ພາຍໃນກໍານົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ. ໃນກໍລະນີບໍ່ປະຕິບັດຕາມກໍານົດເວລາດັ່ງກ່າວ ໃຫ້ຂະແໜງສ່ວຍສາອາກອນ ສະເໜີທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງດໍາເນີນການຫັກເງິນໃນບັນຊີເງິນຝາກ ຕາມຈໍານວນເງິນ

ປັບໃໝດັ່ງກ່າວ ແລະ/ຫຼື ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາ ໂຈະການດຳເນີນທຸລະກິດ, ຖອນທະບຽນວິສາຫະກິດ, ຖອນໃບອະນຸຍາດລົງທຶນ, ໃບອະນຸຍາດອື່ນ ທີ່ກ່ຽວຂ້ອງ ຫຼື ຈະຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

ກຳນົດເວລາຂອງການເລັ່ງທວງແຕ່ລະຄັ້ງ ແມ່ນ ສິບຫ້າວັນ ນັບແຕ່ວັນອອກໃບເລັ່ງທວງ ແລະ ສິ່ງໃຫ້ຜູ້ມອບອາກອນຊົມໃຊ້ທີ່ຍັງຄ້າງມອບອາກອນຊົມໃຊ້ ເປັນຕົ້ນໄປ.

**ມາດຕາ 3 ການປັບປຸງແທນເນື້ອໃນຂອງມາດຕາ**

ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ປັບປຸງແທນເນື້ອໃນຂອງມາດຕາ 32 ຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;

ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ປັບປຸງແທນເນື້ອໃນຂອງມາດຕາ 11, 12, 15, 17, 23, 24, 29, 30, 31, 34, 60 ແລະ 61 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;

ກົດໝາຍວ່າດ້ວຍອາກອນລາຍໄດ້ ປັບປຸງແທນເນື້ອໃນຂອງມາດຕາ 14, 16, 18 ແລະ 73 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;

ກົດໝາຍວ່າດ້ວຍອາກອນຊົມໃຊ້ ປັບປຸງແທນເນື້ອໃນຂອງມາດຕາ 15, 17, 18 ແລະ 38 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019.

**ມາດຕາ 4 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້, ລົງໃນຈົດໝາຍເຫດທາງລັດຖະການ ແລະ ມີຜົນຈັດຕັ້ງປະຕິບັດແຕ່ວັນທີ 1 ມັງກອນ 2022 ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**